ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ
ຫ້ອງການ ຄຊກລ

ເລກທີ 1012 /ຫຄຊກລ
ນະຄອນຫລວງວຽງຈັນ, ວັນທີ 25 ກັນຍາ 2024

# ບົດບັນທຶກ
# ກອງປະຊຸມວິຊາການ
# ໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ປະຈຳໄຕມາດມາດ 3,2024

1. **ວັນເວລາ,ສະຖານທີ່,ຜູ້ເຂົ້າຮ່ວມ**

ໃນຕອນເວລາ 8 ໂມງ 30 ນາທີ ຂອງວັນທີ 19 ກັນຍາ 2024 ສະຖານທີ່ ໂຮງແຮມດອນຈັນພາເລດ ນະຄອນຫຼວງວຽງຈັນ ໄດ້ຈັດກອງປະຊຸມ ວິຊາການໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ປະຈຳໄຕມາດ 3,2024 ພາຍໃຕ້ການເປັນປະທານ ຂອງ ທ່ານ ດວງສີ ທຳມະວົງ ຮອງຫົວໜ້າຫ້ອງການ ຄະນະກຳມະການຄຸ້ມຄ້ອງແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ ມີຜູ້ເຂົ້າຮ່ວມ ຕາງໜ້າກົມສາມັນສຶກສາ, ຕາງກົມສ້າງຄູ, ຕາງໜ້າກົມຮ່ວມມືຕ່າງປະເທດ, ຕາງໜ້າກົມການສຶກສານອກໂຮງຮຽນ, ຕາງໜ້າກົມກິລາມວນຊົນ ພາລະສຶກສາ ແລະ ສິນລະປະ, ກະຊວງສຶກສາທິການ ແລະ ກິລາ, ຕາງໜ້າກົມສື່ມວນຊົນ ກະຊວງ ຖະແຫຼງຂ່າວວັດທະນາທຳ ແລະ ທ່ອງທ່ຽວ, ຕາງໜ້າກົມຂະບວນການ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ວິທະຍຸກະຈາຍສຽງແຫ່ງຊາດ, ໂຄງການເກັບກູ້ລະເບີດແຫ່ງຊາດ, ກອງກວດກູ້ເພື່ອມະນຸດສະທຳກອງທັບ 58, ອົງການ ຮາໂລທຣັດ, ອົງການຊ່ວຍເຫຼືອຂອງປະຊາຊົນນ໊ອກແວ, ອົງການເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ, ອົງການແມັກ ເກັບກູ້ລະເບີດ, ອົງການເວີດອິດູເຄເຊີນ, ບໍລິສັດບໍຄຳເຊໂປນ, ຕາງໜ້າໜ່ວຍງານສຳຫຼວດ, ຕາງໜ້າໜ່ວຍງານຄຸ້ມຄອງຂໍ້ມູນ ຫ້ອງການ ຄຊກລ ເຂົ້າຮ່ວມທັງໝົດ 33 ທ່ານ ຍິງ 21 ທ່ານ.

2. **ຈຸດປະສົງ.**
   - ເພື່ອທົບທວນຜົນຂອງກອງປະຊຸມວິຊາການໂຄສະນາສຶກສາຄວາມສ່ຽງ ຈາກ ລບຕ ໃນໄຕມາດທີ່ຜ່ານມາ ທີ່ເອກະພາບກັນ ບັນຫາໃດທີ່ສາມາດຈັດຕັ້ງປະຕິບັດສຳເລັດ ແລະ ຂໍ້ຄົງຄ້າງ;
   - ລາຍງານການເຄື່ອນໄຫວ ການຈັດຕັ້ງປະຕິບັດວຽກງານ ໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ 9 ເດືອນ ແລະ ທິດທາງແຜນການໃນໄຕມາດ 04;
   - ອັບເດດສະຖິຕິການເກີດອຸປະຕິເຫດ ຈາກ ລບຕ ຜູ້ຮັບບາດເຈັບ ແລະ ເສຍຊີວິດ ປະຈຳໄຕມາດ 3, 2024,
   - ອັບເດດຂະບວນການປັບປຸງມາດຕະຖາດແຫ່ງຊາດ ບົດທີ13 ທີ່ຕິດພັນກັບວຽກໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ;
   - ອັບເດດແບບຟອມລາຍງານເຂົ້າຖານຂໍ້ມູນແຫ່ງຊາດ;
   - ລາຍງານຄວາມຄືບໜ້າບົດບາດຍິງຊາຍ;
   - ປຶກສາຫາລື ຊອກຫາວິທີທາງແກ້ໄຂ.

3. ເນື້ອໃນກອງປະຊຸມ

ນຳສະເໜີຜົນຂອງກອງປະຊຸມວິຊາການໃນໄຕມາດທີ່ຜ່ານມາມີຫຼາຍຫົວຂໍ້ທີ່ສາມາດຈັດຕັ້ງປະຕິບັດສຳເລັດ ແລະ ມີບາງບັນຫາທີ່ຍັງຕ້ອງສືບຕໍ່ຈັດປະຕິບັດໂດຍສະເພາະແມ່ນແຜນການເຄື່ອນໄຫວ ຂອງບັນດາວິຊາການປະຕິບັດງານ ປະຈຳເດືອນ, ໄຕມາດ ແລະ ແຜນປີ, ງົບປະມານໃນການຕິດຕາມ ຊຸກຍູ້ ແລະ ລາຍງານໃຫ້ທີ່ປະຊຸມໄດ້ຮັບຊາບກ່ຽວກັບກ່ຽວກັບຜົນສຳເລັດການຈັດຕັ້ງປະຕິບັດວຽກໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ໃນໄລຍະ 9 ເດືອນ ປີ 2024 ພ້ອມກັບອັບເດດຈຳນວນອຸປະຕິເຫດທີ່ເກີດຈາກ ລບຕ ໃນໄຕມາດ 1 ຫາໄຕມາດ 3 ມີທັງໝົດ 22 ກໍລະນີ ມີຜູ້ໄດ້ຮັບເຄາະທັງໝົດ 46 ຄົນ, ຊາຍ 35 ຄົນ, 11 ຄົນ ໃນນັ້ນ ເສຍຊີວິດ 9 ຄົນ, ເດັກນ້ອຍ 6, ຜູ້ໃຫ່ຍ 3 ຄົນ ສາເຫດເກີດອຸປະຕິເຫດຂຸດດິນເຮັດສວນ, ດັ່ງໄຟ ແລະ ຫຼິ້ນລະເບີດ.

ປຶກສາຫາລືກ່ຽວກັບແບບຟອມລາຍງານເຂົ້າຖານຂໍ້ມູນແຫ່ງຊາດ ເຫັນວ່າບາງຫົວຂໍ້ບໍ່ທັນໄດ້ແທດເໝາະກັບການຈັດຕັ້ງປະຕິບັດຕົວຈິງ ຕ້ອງໄດ້ສືບຕໍ່ປັບປຸງໃຫ້ຖືກຕ້ອງຕາມທ້ອງຖິ່ນຕົວຈິງ ເປັນຕົ້ນແມ່ນບາງຄຳສັບ ເຊັ່ນ: ອື່ນໆ ຄວນໃຊ້ບໍ່ໃນແບບຟອມລາຍງານ ອາດຈະກຳນົດໃຫ້ສັດເຈນ ແລະ ລາຍງານຂະບວນການປັບປຸງມາດຕະຖານແຫ່ງຊາດ ບົດທີ່ 13 ຕິດພັນກັບວຽກໂຄສະນາສຶກສາຄວາມສ່ຽງ ໄພ ຈາກ ລບຕ ເຊິ່ງອາດຈະມີກອງປະຊຸມສະເພາະໃນການຄົ້ນຄວ້າຮ່ວມກັບວິຊາການປະຕິບັດງານເພື່ອລົງເລິກເນື້ອໃນດັ່ງກ່າວ. ພ້ອມກັບນຳສະເໜີຜົນຂອງການສຳຫຼວດພຶດຕິກຳ ແລະ ທັດສະນະຄະຕິ (KAP) ໃຫ້ທີ່ປະຊຸມຮັບຮູ້ ບັນດາຂໍ້ແນະນຳຜົນຂອງການສຳຫຼວດເຫນາລົມບໍ່ຄວນນຳໄປເຜີຍແຜ່ໃຫ້ວິຊາການປະຕິບັງານນຳໃຊ້ ພ້ອມນັ້ນລາຍງານຄວາມຄືບໜ້າການເຊື່ອມສານບົດບາດຍິງຊາຍ ເຂົ້າໃນວຽກງານໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ຜູ້ທີ່ໄດ້ຮັບການແຕ່ງຕັ້ງເປັນຈຸດປະສານງານ ວຽກ EORE ເພື່ອຈະໄດ້ຝຶກອົບຮົມ ໃນປະຈຸບັນຢູ່ຂະບວນການຈັດພິມປື້ມຄູ່ມື ເຊື່ອມສານບົດບາດຍິງຊາຍ ເຂົ້າໃນຂະແໜງການລະເບີດບໍ່ທັນແຕກ.

4. ທິດທາງແຜນການ

- ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ ຄັ້ງທີ IX ກໍ່ຄືແຜນຂອງລັດຖະບານກຳນົດວຽກງານແກ້ບັນຫາລະເບີດບໍ່ທັນແຕກເປັນວຽກທີ່ສຳຄັນໃນການພັດທະນາເສດຖະກິດສັງຄົມຊີວິດການເປັນຢູ່ຂອງປະຊາຊົນລາວ ຕິດພັນກັບສະເພາະແຜນຍຸດທະສາດວ່າການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ໃນວຽກໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ເພື່ອໃຫ້ຫຼຸດຜ່ອນຈຳນວນ ຜູ້ໄດ້ຮັບເຄາະຮ້າຍຈາກລະເບີດບໍ່ທັນແຕກໃຫ້ຕ່ຳກວ່າ 40 ຄົນຕໍ່ປີ ມາທຽບໃສ່ປີນີ້ຖືວ່າພວກເຮົາກໍ່ພົບບັນຫຼາຍ;
- ຕ້ອງມີກອງປະຊຸມສະເພາະເພື່ອລົງເລິກກ່ຽວກັບປັບປຸງມາດຕະຖານແຫ່ງຊາດຮ່ວມກັບວິຊາການປະຕິບັດງານ
- ສືບຕໍ່ລາຍງານຄວາມຄືບໜ້າຂະບວນການປັບປຸງມາດຕະຖານແຫ່ງຊາດ ທີ່ຕິດພັນກັບວຽກໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ເພື່ອໃຫ້ສຳໃນທ້າຍປີນີ້;
- ສືບຕໍ່ລາຍງານຄວາມຄືບໜ້າໃນການເຊື່ອມສານົດບາດຍິງຊາຍທີ່ເປັນຈຸດປະສານງານເຂົ້າໃນວຽກໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ;
- ສືບຕໍ່ຄົ້ນຄວ້າກ່ຽວກັບການນຳໃຊ້ແບບຟອມລາຍງານເຂົ້າຖານຂໍ້ມູນແຫ່ງຊາດ ໂດຍມີການສົມທຽບກັບແບບຂອງ IMAS;
- ແຜນການເຄື່ອນໄຫວວຽກປະຈຳເດືອນ; ປະຈຳໄຕມາດ ແລະ ແຜນປີ ໃຫ້ວິຊາການປະຕິບັດງານໃຫ້ໜ່ວຍງານຄຸ້ມຄອງໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ເພື່ອຈະໄດ້ຕິດຕາມການຈັດຕັ້ງປະຕິບັດ

5. ຄຳເຫັນຊີ້ນຳຂອງປະທານ:

- ສະເໜີໃຫ້ບັນດາວິຊາການປະຕິບັດງານສົ່ງຂໍ້ມູນເຂົ້າໃນຫໍສະໝຸດດີຈີຕອນ (E-library) ເພາະໄລຍະຜ່ານມາພວກເຮົາເຫັນບັນຫາໃນການຝຶກອົບຮົມໃຫ້ນັກເກັບກູ້ລະເບີດຂັ້ນ 4 (EOD4) ມີບົດຮຽນຫຼາຍທີ່ມີຜົນ

- ປະໂຫຍດຫຼາຍ ຜ່ານມາຫຼາຍປີ ຈະມີການຈັດຝຶກອົບຮົມໃຫ້ລຸ້ນຕໍ່ໄປຊອກປຶ້ມບົດຮຽນແມ່ນມີຈຳນວນຈຳກັດ ສະນັ້ນ, ເພື່ອເປັນສູນລວມຂໍ້ມູນເກັບໄວ ບ່ອນດຽວໃນຂະແໜງການແກ້ໄຂບັນຫາລະເບີດບໍ່ທັນແຕກ;
- ການຝຶກອົບຮົມວຽກໂຄສະນາ ສະເໜີໃຫ້ອົງການປະຕິບັດງານມາຜ່ານຫ້ອງການ ຄຊກລ ເພື່ອເນື້ອໃນໂຄສະນາໃຫ້ເປັນລວງດຽວກັນ ພ້ອມກັບເປັນການຕິດຕາມ ແລະ ຄຸ້ມຄອງຜູ້ທີ່ຜ່ານການຝຶກອົບຮົມວຽກດັ່ງກ່າວ;
- ສະເໜີຈັດກອງປະຊຸມເພື່ອຄົ້ນຄວ້າໃນການປັບປັງມາດຕະຖານແຫ່ງຊາດ ເພາະອົງການປະຕິບັດງານແມ່ນເປັນຜູ້ຈັດຕັ້ງຕົວຈິງ;
- ຕິດພັນກັບການຜະລິດ ສື່ໂຄນາສຶກສາຄວາມສ່ຽງໄພ ຈາກ ລບຕ ,ເນື້ອໃນ ສະເໜີໃຫ້ອົງການປະຕິບັດງານມາຜ່ານຫ້ອງການ ຄຊກລ ເພື່ອກວດກາດ້ານຫຼັກວິຊາການ ໂດຍສະເພາະແມ່ນມາດຕະຖານແຫ່ງ ສ່ວນວ່າຕິດພັນວັດທະນະທຳ ສື່ອອກສັງຄົມ ແມ່ນໃຫ້ໄປຜ່ານກົມສື່ມວນຊົນ ກະຊວງຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວ ເພາະເພີ່ນເປັນເສນາທິການຫຼັກໃຫ້ແກ່ລັດຖະບານ;
- ສະເໜີໃຫ້ ອົງການສະຫະປະຊາເພື່ອການພັດທະນາ ປະຈຳ ສປປ ລາວ ພິມປຶ້ມຜົນຂອງການສຳຫຼວດພຶດຕິກຳ ແລະ ທັດສະນາຄະຕິກ່ຽວກັບລະເບີດບໍ່ທັນແຕກ KAP ເພື່ອເອົາຄຳແນະນຳມາເຜີຍແຜ່ໂດຍສະເພາະອົງການປະຕິບັດງານໄດ້ນຳປະຈັດຕັ້ງປະຕິບັດ;
- ສະເໜີໃຫ້ບັນດາອົງການປະຕິບັດງານ ປັບອັດຕາກິນ ຢູ່ພັກ-ເຊົ່າສຳລັບພະນັກງານທີ່ເຂົ້າຮ່ວມປະຊຸມຂອງໂຄງການ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ໂດຍຄິດໄລ່ເປັນຈຳນວນ 560.000 ກີບຕໍ່ມື້ ໂດຍອີງໃສແຈ້ງການຂອງກະຊວງການຕ່າງປະເທດ ສະບັບເລກທີ 6142/ຕປທ.ຈສກ ລົງວັນທີ 18 ກັນຍາ ໂດຍເລີ່ມຈັດຕັ້ງປະຕິບັດ ວັນທີ 01 ຕຸລາ 2024.

ກອງປະຊຸມໄດ້ສິ້ນສຸດໃນເວລາ 12:20 ໂມງໃນຕອນແລງຂອງວັນ 17 ກັນຍາ 2024.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານເພື່ອຊາບ ແລະ ໃຫ້ທິດຊີ້ນຳຕາມເຫັນສົມຄວນດ້ວຍ.

ປະທານກອງປະຊຸມ

ດວງສີ ທຳມະວົງ

ຜູ້ບັນທຶກ

ຈັນສະໝອນ ສີຫາລາດ